**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ຫ້ອງວ່າການກະຊວງ

ເລກທີ...713......./ຫວກ

ນະຄອນຫຼວງວຽງຈັນ, ລົງວັນທີ...08 ສິງຫາ 2024......

# ແຈ້ງການ

**ຮຽນ:** ທ່ານ ຫົວໜ້າກອງບັນຊາການປກສ ນະຄອນຫຼວງວຽງຈັນ, ບັນດາກອງບັນຊາການ ປກສ ແຂວງ ໃນຂອບເຂດທົ່ວປະເທດ ທີ່ນັບຖືຢ່າງສູງ.

**ເລື່ອງ:** ໃຫ້ຢຸດເຊົາການຜະລິດບັດປະຈໍາຕົວປະຊາຊົນລາວແບບເກົ່າ ( ບັດຂາວ ).

- **ອີງຕາມ** ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ. ສະບັບເລກທີ 1689/ປກສ, ລົງວັນທີ 17 ກັນຍາ 2021.
- **ອີງຕາມ** ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການຈົດທະບຽນສໍາມະໂນຄົວ ອອກບັດປະຈໍາຕົວຂອງພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ສະບັບເລກທີ 2072/ປກສ ລົງວັນທີ 09 ຕຸລາ 2023.

ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ຂໍຖືເປັນກຽດແຈ້ງມາຍັງທ່ານ ຫົວໜ້າກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ບັນດາກອງບັນຊາການ ປກສ ແຂວງໃນຂອບເຂດທົ່ວປະເທດ ຮັບຊາບ ແລະ ຊ່ວຍຊີ້ນໍາຫ້ອງຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ລາຍລະອຽດດັ່ງນີ້:

1. ໃຫ້ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ບັນດາກອງບັນຊາການ ປກສ ແຂວງ ໃນຂອບເຂດທົ່ວປະເທດ ຢຸດເຊົາການຜະລິດບັດປະຈໍາຕົວປະຊາຊົນລາວແບບເກົ່າ ( ບັດຂາວ ).
2. ຖ້າຫາກກອງບັນຊາການ ປກສ ແຂວງ ຫຼື ກອງບັນຊາການ ປກສ ເມືອງ ຍັງບໍ່ຜະລິດບັດປະຈໍາຕົວແບບໃໝ່ ແລະ ຍັງບໍ່ເປີດນໍາໃຊ້ລະບົບຖານຂໍ້ມູນແບບໃໝ່ PIM ຕ້ອງໄດ້ຮັບຜິດຊອບຄ່າເຊົ່າສາຍສົ່ງສັນຍານອິນເຕີເນັດໃນແຕ່ລະເດືອນຕາມມູນຄ່າເຊົ່າ ທີ່ກະຊວງປ້ອງກັນຄວາມສະຫງົບໄດ້ຊໍາລະຄ່າເຊົ່າໃຫ້ບໍລິສັດ.
3. ໃຫ້ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ບັນດາກອງບັນຊາການ ປກສ ແຂວງ ຊີ້ນໍາຫ້ອງຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ສະຫຼຸບຂໍ້ມູນການຜະລິດບັດປະຈໍາຕົວແບບເກົ່າ ( ບັດຂາວ ), ແລ້ວລາຍງານມາຍັງກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ກໍານົດເວລາສົ່ງບໍ່ໃຫ້ກາຍ ວັນທີ 31 ສິງຫາ 2024.

**ດັ່ງນັ້ນ,** ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ, ຈຶ່ງແຈ້ງມາຍັງທ່ານ ຫົວໜ້າກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ບັນດາກອງບັນຊາການ ປກສ ແຂວງໃນຂອບເຂດທົ່ວປະເທດ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງວ່າການກະຊວງ**

ກະຊວງປ້ອງກັນຄວາມສະຫງົບ
ຫ້ອງວ່າການກະຊວງ

**ພົຕ. ສຸລິນະ ແກ້ວປະເສີດ**

ເບີໂທປະສານ:
ພັທ ທອງຄໍາ ພັນທະລັງສີ 02054372132